ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0725

ກະຊວງອຸດສາຫະກຳ ແລະ ການຄ້າ　　　　　ເລກທີ............../ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ...06 AUG 2020

# ຂໍ້ຕົກລົງ

## ວ່າດ້ວຍການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 230/ນຍ, ລົງວັນທີ 27 ກໍລະກົດ 2017;
- ອີງຕາມ ດຳລັດ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ໜັງສືສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ, ສະບັບເລກທີ 1848/ກຂອ.ຄຄ, ລົງວັນທີ 09 ມິຖຸນາ 2020.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ສົ່ງອອກສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ສາກົນ.

### ມາດຕາ 2 ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ

ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ແມ່ນຜູ້ສົ່ງອອກສິນຄ້າເປັນຜູ້ດຳເນີນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຕາມລະບຽບແຫຼ່ງກຳເນີດສິນຄ້າຂອງບັນດາປະເທດທີ່ໃຫ້ສິດທິພິເສດທາງການຄ້າ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ** ໝາຍເຖິງ ຜູ້ສົ່ງອອກສິນຄ້າສາມາດນຳໃຊ້ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ (Statement on Origin) ໃນການສົ່ງສິນຄ້າອອກແຕ່ລະຄັ້ງຕາມລະບຽບແຫຼ່ງກຳເນີດສິນຄ້າຂອງບັນດາປະເທດທີ່ໃຫ້ສິດທິພິເສດທາງການຄ້າ;
2. **ໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ** (Certificate of Certified

Exporter) ໝາຍເຖິງ ໃບຢັ້ງຢືນການໄດ້ຮັບສິດເປັນຜູ້ສົ່ງອອກທີ່ໄດ້ເງື່ອນໄຂໃນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຊຶ່ງອອກໂດຍຫ້ອງການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ;

3. **ລະບົບການລົງທະບຽນເປັນຜູ້ສົ່ງອອກ (Registered Exporter System: REX)** ໝາຍເຖິງ ຜູ້ສົ່ງອອກທີ່ລົງທະບຽນນຳຫ້ອງການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ເພື່ອຂໍສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໂດຍຜ່ານເວັບໄຊ https://ec.europa.eu/taxation_customs/registered-exporter system_en;

4. **ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ (Statement on Origin)** ໝາຍເຖິງ ເອກະສານຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສິດທິພິເສດທາງການຄ້າ ຊຶ່ງສາມາດເຮັດໄດ້ຈາກໃບແຈ້ງລາຄາ (Invoice) ແລະ ໃບຫຸ້ມຫໍ່ (Packing List) ໂດຍການລະບຸລາຍລະອຽດຂອງການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຂອງຜູ້ສົ່ງອອກດ້ວຍຕົນເອງຕາມທີ່ກຳນົດໄວ້ໃນລະບຽບລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ຕໍ່ເຈົ້າໜ້າທີ່ພາສີຂອງບັນດາປະເທດປາຍທາງ ເພື່ອຂໍນຳໃຊ້ສິດໃນການຫຼຸດຜ່ອນ ຫຼື ຍົກເວັ້ນອັດຕາພາສີນຳເຂົ້າພາຍໃຕ້ລະບົບສິດທິພິເສດທາງການຄ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າຂອງບັນດາປະເທດ ທີ່ນຳໃຊ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າຜ່ານລະບົບ REX.

## ໝວດທີ 2
## ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ

**ມາດຕາ 5 ຂັ້ນຕອນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າຂອງບັນດາປະເທດ ມີຂັ້ນຕອນ ດັ່ງນີ້:

1. ສະໝັກລົງທະບຽນ (Pre - Application) ຜ່ານເວັບໄຊຂອງສະຫະພາບເອີຣົບ;
2. ຂໍສິດເປັນຜູ້ຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ;
3. ລົງທະບຽນໃນລະບົບ REX.

**ມາດຕາ 6 ເງື່ອນໄຂຂອງຜູ້ຂໍສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ຜູ້ທີ່ສາມາດຂໍສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ສົ່ງອອກສິນຄ້າທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ໄດ້ສະໝັກລົງທະບຽນ (Pre - Application) ຜ່ານເວັບໄຊຂອງສະຫະພາບເອີຣົບ.
3. ໄດ້ລົງທະບຽນໃນລະບົບ REX.

**ມາດຕາ 7 ເອກະສານປະກອບຂໍສິດເປັນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ຜູ້ສົ່ງອອກທີ່ມີຈຸດປະສົງຂໍສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕ້ອງປະກອບເອກະສານສະເໜີຫາ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ດັ່ງນີ້:

1. ໃບສະເໜີ ຕາມແບບພິມທີ່ ກົມການນຳເຂົ້າ ແລະ ສົ່ງອອກ ກຳນົດໄວ້;
2. ໃບສະໝັກເພື່ອລົງທະບຽນ (Pre - Application) ຜ່ານເວັບໄຊ https://ec.europa.eu/taxation _customs/registered-exportersystem_en;

3. ໃບຮັບຮອງສິນຄ້າໄດ້ແຫຼ່ງກໍາເນີດສິນຄ້າ (Confirmation of Product Eligibility: CPE).

**ມາດຕາ 8 ການພິຈາລະນາອອກໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ**

ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ດໍາເນີນການກວດກາເອກະສານ ແລະ ອອກໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ໃຫ້ຜູ້ຮ້ອງຂໍພາຍໃນກໍານົດເວລາ ສອງ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

ຖ້າເຫັນວ່າ ເອກະສານປະກອບຫາກມີເນື້ອໃນບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍພາຍໃນກໍານົດເວລາ ສອງ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ ເພື່ອໃຫ້ຜູ້ຮ້ອງຂໍແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີທີ່ບໍ່ສາມາດອອກໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ຕ້ອງໄດ້ແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍພາຍໃນກໍານົດເວລາ ສອງ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 9 ການລົງທະບຽນໃນລະບົບ REX**

ພາຍຫຼັງອອກໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງປ້ອນຂໍ້ມູນຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງເຂົ້າໃນລະບົບ REX ແລະ ແຈ້ງໃຫ້ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຊາບພາຍຫຼັງສໍາເລັດການລົງທະບຽນ.

**ມາດຕາ 10 ການດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ**

ໃນການສົ່ງອອກສິນຄ້າແຕ່ລະຄັ້ງ ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ຕ້ອງມີໃບແຈ້ງລາຍລະອຽດແຫຼ່ງກໍາເນີດສິນຄ້າເພື່ອຂໍຍົກເວັ້ນ ຫຼື ຫຼຸດຜ່ອນອັດຕາພາສີຂາເຂົ້ານໍາປະເທດປາຍທາງ ຊຶ່ງໃບແຈ້ງລາຍລະອຽດແຫຼ່ງກໍາເນີດສິນຄ້າແມ່ນໃຊ້ປ່ຽນແທນໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ແບບພິມ ເອ (Form A).

## ໝວດທີ 3
## ສິດ ແລະ ພັນທະຂອງຜູ້ສົ່ງອອກ

**ມາດຕາ 11 ສິດຂອງ ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ**

ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ມີສິດ ດັ່ງນີ້:

1. ສາມາດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ໄປບັນດາປະເທດທີ່ໃຫ້ສິດທິພິເສດທາງການຄ້າ ທີ່ນໍາໃຊ້ການຢັ້ງຢືນແຫຼ່ງກໍາເນີດສິນຄ້າຜ່ານລະບົບ REX;
2. ໄດ້ຮັບສິດຕາມທີ່ກໍານົດໄວ້ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

**ມາດຕາ 12 ພັນທະຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ**

ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ມີພັນທະ ດັ່ງນີ້:

1. ປະຕິບັດຕາມເງື່ອນໄຂຂອງຜູ້ທີ່ສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;

2. ເກັບຮັກສາເອກະສານທີ່ກ່ຽວຂ້ອງກັບການຜະລິດສິນຄ້າ ແລະ ການຢັ້ງຢືນແຫຼ່ງກຳເນີດສິນຄ້າຄົບຊຸດ ຢ່າງໜ້ອຍ ສາມ ປີ ນັບແຕ່ປີອອກຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ເພື່ອເປັນຂໍ້ມູນອ້າງອີງໃນເວລາຖືກກວດສອບ ຫຼື ຊັກຖາມຄືນມາໃນກໍລະນີມີການກວດສອບຄືນແຫຼ່ງກຳເນີດສິນຄ້າ ທີ່ສິ່ງໄສກ່ຽວກັບຂະບວນການ ແລະ ຂັ້ນຕອນຂອງການຜະລິດສິນຄ້າ ຕ້ອງໃຫ້ຄວາມຮ່ວມມືໃນການອະທິບາຍ - ຊີ້ແຈງ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອເປັນບ່ອນອີງໃນການພິຈາລະນາແກ້ໄຂບັນຫາ;

3. ລາຍງານສະຖິຕິການສົ່ງອອກສິນຄ້າພາຍໃຕ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໃຫ້ຫ້ອງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ຢ່າງເປັນປົກກະຕິໃນແຕ່ລະເດືອນ ແລະ ປີ ໂດຍຊ້າສຸດບໍ່ໃຫ້ກາຍວັນທີ 10 ຂອງເດືອນຖັດໄປ. ກໍລະນີມີການດັດແກ້ ຫຼື ລົບລ້າງ Statement on Origin ທີ່ໄດ້ແຈ້ງຕໍ່ເຈົ້າໜ້າທີ່ພາສີຂາເຂົ້າແລ້ວແມ່ນໃຫ້ສັງລວມ ແລະ ລາຍງານກ່ຽວກັບ Statement on Origin ທີ່ໄດ້ດັດແກ້ ຫຼື ລົບລ້າງນັ້ນຄືນ;

4. ປະຕິບັດພັນທະອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຂໍ້ຫ້າມ

### ມາດຕາ 13 ຂໍ້ຫ້າມສຳລັບຜູ້ສົ່ງອອກ ທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ

ຫ້າມຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ມີພຶດຕິກຳ ດັ່ງນີ້:

1. ແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

3. ລັກລອບເອົາສິນຄ້າທີ່ບໍ່ໄດ້ເງື່ອນໄຂແຫຼ່ງກຳເນີດສິນຄ້າມາຂໍສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ;

4. ມີພຶດຕິກຳອື່ນທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

### ມາດຕາ 14 ຂໍ້ຫ້າມສຳລັບພະນັກງານຂອງຫ້ອງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ

ຫ້າມພະນັກງານ ຂອງຫ້ອງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວໃນການພິຈາລະນາເອກະສານ;

2. ສວຍໃຊ້ອຳນາດໜ້າທີ່ເພື່ອຮຽກເອົາຜົນປະໂຫຍດສ່ວນຕົວ, ພັກພວກ ແລະ ຍາດຕິພີ່ນ້ອງ;

3. ສົມຮູ້ຮ່ວມຄິດ, ປົດບັງ, ປົກປ້ອງ ໃຫ້ຄວາມຮ່ວມມືແກ່ຜູ້ກະທຳຄວາມຜິດ, ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

4. ມີພຶດຕິກຳອື່ນທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

### ມາດຕາ 15 ການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

ຫ້ອງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຜ່ານລະບົບການລົງທະ

ບຽນເປັນຜູ້ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າ ແມ່ນມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ຄຸ້ມຄອງວຽກງານການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ, ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງວຽກງານດັ່ງກ່າວ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງກົມການນໍາເຂົ້າ ແລະ ສົ່ງອອກ**

ການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ກົມການນໍາເຂົ້າ ແລະ ສົ່ງອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ນິຕິກໍາ ແລະ ລະບຽບການ ກ່ຽວກັບວຽກງານງານການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສິດທິພິເສດທາງການຄ້າ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່, ແນະນໍາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ສັງຄົມຢ່າງທົ່ວເຖິງ;

3. ເປັນເຈົ້າການໃນການຈັດຝຶກອົບຮົມໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ກ່ຽວກັບວຽກງານການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ຜ່ານລະບົບ REX;

4. ຄັດເລືອກ ຜູ້ສົ່ງອອກທີ່ມີເງື່ອນໄຂ ແລະ ແນະນໍາການລົງທະບຽນ ເພື່ອຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ;

5. ດໍາເນີນການລົງທະບຽນໃຫ້ຜູ້ສົ່ງອອກ ເປັນຜູ້ສົ່ງອອກໃນລະບົບ REX;

6. ພິຈາລະນາການມອບສິດ, ຕິດຕາມການນໍາໃຊ້ລະບົບ REX, ຕັກເຕືອນ, ໂຈະ ຫຼື ຖອນ ໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ;

7. ລົງຕິດຕາມ ແລະ ກວດກາຂະບວນການຜະລິດສິນຄ້າຢູ່ ບໍລິສັດ/ໂຮງງານ ສໍາລັບສິນຄ້າທີ່ສົ່ງອອກພາຍໃຕ້ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ໂດຍບໍ່ຈໍາເປັນແຈ້ງກ່ອນລ່ວງໜ້າ;

8. ສະໜອງຂໍ້ມູນ, ດັດແກ້, ຍົກເລີກ ການລົງທະບຽນເປັນຜູ້ສົ່ງອອກໃນລະບົບ REX;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງໃຫ້ຄະນະນໍາກະຊວງ ແລະ ຄະນະກໍາມາທິການ ຂອງສະຫະພາບເອີຣົບ ເປັນແຕ່ລະໄລຍະ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບປະສິດທິຜົນສູງ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ, ສະບັບເລກທີ 0087/ອຄ.ກຂອ, ລົງວັນທີ 19 ມັງກອນ 2017.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ